ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການປະກັນສັງຄົມແຫ່ງຊາດ

ເລກທີ 2928 /ອປຊ.

ນະຄອນຫລວງວຽງຈັນ, ວັນທີ 12.08.2026.

# ໜັງສືແຈ້ງເຊີນປະມູນ

1. ອົງການປະກັນສັງຄົມແຫ່ງຊາດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບສະໜອງ ອຸປະກອນເຄື່ອງໄອທີ ແລະ ອຸປະກອນເຄື່ອງໃຊ້ຫ້ອງການ ສໍາລັບການສະໜອງສິນຄ້າ ແມ່ນໄດ້ແບ່ງເປັນສອງພູດ ຄື:

   **ພູດທີ 01:** ໂນດບຸກ, ຄອມພິວເຕີຕັ້ງໂຕະ, ຈັກພິມບັດ, ເຄື່ອງສະແກນ ແລະ ໝໍ້ເກັບໄຟ ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

   **ພູດທີ 02:** ໂຕະ, ຕັ່ງ ແລະ ຕູ້ເຫລັກໃສ່ເອກະສານ ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງເຄື່ອງດັ່ງກ່າວ;

4. ບໍລິສັດໃດສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດໄດ້ທີ່ອົງການປະກັນສັງຄົມແຫ່ງຊາດ (ພະແນກ ທະບຽນ-ເງິນສົມທົບ) ຊັ້ນ 3 ຕັ້ງຢູ່ບ້ານ: ທົ່ງສາງນາງ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທ 020 56654549. ຈະເລີ່ມຂາຍຊອງແຕ່ວັນທີ 12 ສິງຫາ 2026 ເປັນຕົ້ນໄປ, ຊອງປະມູນ ພູດທີ 01: ລາຄາ 3,000,000 ກີບ/ຊອງ ແລະ ຊອງປະມູນ ພູດທີ 02: 1,500,000 ກີບ/ຊອງ ຈໍານວນເງິນດັ່ງກ່າວຈະບໍ່ສົ່ງຄືນຖ້າບໍລິສັດຂອງທ່ານບໍ່ຊະນະການປະມູນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.

5. **ຊອງປະມູນ ພູດທີ 01:** ຕ້ອງສົ່ງກ່ອນເວລາ 9:00 ໂມງ ຂອງວັນທີ 18 ກັນຍາ 2026. ຊອງປະມູນໃດທີ່ສົ່ງຊ້າກວ່າກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບ ແລະ ເປີດຊອງໃນເວລາ 9:00 ໂມງ, ຂອງວັນທີ 18 ກັນຍາ 2026;

6. **ຊອງປະມູນ ພູດທີ 02:** ຕ້ອງສົ່ງກ່ອນເວລາ 9:30 ໂມງ ຂອງວັນທີ 18 ກັນຍາ 2026. ຊອງປະມູນໃດທີ່ສົ່ງຊ້າກວ່າກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງແມ່ນຈະປິດຮັບ ແລະ ເປີດຊອງໃນເວລາ 9:30 ໂມງ, ຂອງວັນທີ 18 ກັນຍາ 2026, ຊອງປະມູນທັງສອງພູດແມ່ນຈະເປີດຊອງຂຶ້ນ ທີ່ຫ້ອງປະຊຸມຊັ້ນ 2 ຂອງອົງການປະກັນສັງຄົມແຫ່ງຊາດ ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;

7. ທຸກໆຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫລື ໜັງສືຄໍ້າປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫລຸດ 02% (ສອງສ່ວນຮ້ອຍ) ຂອງມູນຄ່າສະເໜີ.

ຫົວໜ້າອົງການ

ພົນຕີ ສະໝອນ ສຸກທະວົງ

